# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 19 ມີນາ 2017(3-19-2017)

---

## ໄຊຊະນະເໜືອຄວາມບາບ

ອຸປະນິສັຍແບບໃດທີ່ປະຖິ້ມແລ້ວເຮັດໃຫ້ທ່ານຮູ້ສຶກດີຂຶ້ນ?

**ຈຸດສຳຄັນໃນບົດຮຽນ**: ຄວາມບາບບໍ່ຄວບຄຸມຂ້າພະເຈົ້າອີກຕໍ່ໄປ ເພາະພຣະເຢຊູເປັນຜູ້ດູແລ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ຂ້າພະເຈົ້າໄດ້ແຕ່ງງານມານານເຖິງ 35 ປີ, ແລະນັ້ນເປັນຈຳນວນຕົວເລກຂອງເວລາສຳລັບຂ້າພະເຈົ້າເຮັດຜິດ. ຂ້າພະເຈົ້າໝາຍຄວາມວ່າເຮັດຜິດແທ້ໆ. ເມື່ອຂ້າພະເຈົ້າເຮັດຜິດ ຂ້າພະເຈົ້າກໍຂໍໂທດແລະຂໍຮ້ອງພັລະຍາຂອງຂ້າພະເຈົ້າໃຫ້ອະພັຍແກ່ຂ້າພະເຈົ້າ, ແຕ່ຫຼາຍກວ່ານັ້ນອີກ, ນາງຕ້ອງການຫຼາຍກວ່າຄຳຂໍໂທດ. ນາງຕ້ອງການຄວາມໝັ້ນໃຈຂອງຂ້າພະເຈົ້າວ່າຂ້າພະເຈົ້າຈະບໍ່ຫຼີບໄປເຮັດຜິດທີ່ໂງ່ຊ້ຳແລ້ວຊ້ຳອີກ ທຳອິດຂ້າພະເຈົ້າກໍຍັງເຮັດຢູ່. ນາງຢາກເຫັນການສະແດງອອກວ່າຂ້າພະເຈົ້າມີຄວາມເສັຽໃຈແທ້ໃນການເຮັດຜິດ.

ຄຳສັບ **ສະແດງຄວາມເສັຽໃຈຕໍ່ສິ່ງທີ່ກະທຳຜິດ** ມີຄວາມໝາຍຢ່າງແທ້ຈິງວ່າ " ຫັນກັບ" ຫຼື " ປ່ຽນທິດທາງໃໝ່." ການເສັຽໃຈໃນສິ່ງທີ່ເຮັດຜິດແມ່ນຫັນກັບທິດທາງໃນຊີວິດ ເມື່ອທ່ານຮູ້ສຶກວ່າກຳລັງມຸ້ງໜ້າເດີນໄປໃນທິດທາງທີ່ຜິດ ແລະທ່ານຫັນກັບ ມຸ້ງໜ້າກັບໄປໃນທາງທີ່ຖືກ.

ຊີວິດຄຣິສຕຽນແມ່ນຊີວິດຂອງຄວາມຮູ້ສຶກໃນການເຮັດຜິດ, ແຕ່ຄວາມສຳນຶກໃນການເຮັດຜິດນັ້ນມີຄວາມໝາຍຫລາຍກວ່າຄວາມຮູ້ສຶກເສັຽໃຈຕໍ່ສິ່ງທີ່ພວກເຮົາເຮັດ! ການຊອກຫາການໃຫ້ອະພັຍເປັນພຽງການເລີ້ມຕົ້ນ. ພຣະຄຣິດໄດ້ເຮັດຫລາຍກວ່າການປົກປ້ອງເຮົາບໍ່ໃຫ້ເຮັດຊ້ຳແລ້ວຊ້ຳອີກໃນການເຮັດຜິດແລະຂໍໂທດ.

ພຣະຄຣິດໃຫ້ເຮົາຫລາຍກວ່າການໃຫ້ອະພັຍໂທດສຳລັບຄວາມບາບ. ພຣະອົງໃຫ້ເຮົາມີໄຊຊະນະເໜືອຄວາມບາບ. ໃນພຣະທັມໂຣມ 6, ໂປໂລໄດ້ຂຽນໄວ້ກ່ຽວກັບເລື່ອງນີ້.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ສຶກສາພຣະຄັມພີ

**1. <u>ໂຣມ 6:4-7</u>:**

*4 ເຫດສັນນັ້ນພວກເຮົາຈຶ່ງໄດ້ຖືກຝັງໄວ້ກັບພຣະອົງໂດຍການຮັບບັບຕິສະມາເຂົ້າສ່ວນໃນການສິ້ນພຣະຊົນນັ້ນ ເພື່ອ
ວ່າພຣະຄຣິດໄດ້ຖືກຊົງບັນດານໃຫ້ຄືນພຣະຊົນ ໂດຍຣິດເດດອັນຮຸ່ງເຮືອງຂອງພຣະບິດາສັນໃດ ເຮົາທັງຫລາຍກໍຈະ
ໄດ້ດຳເນີນຊີວິດໃໝ່ເໝືອນກັນສັນນັ້ນ. 5 ເພາະວ່າຖ້າເຮົາທັງຫລາຍເຂົ້າຕິດສນິດກັບພຣະອົງແລ້ວໃນການຕາຍຢ່າງ
ພຣະອົງ ເຮົາກໍຈະເຂົ້າສນິດກັບພຣະອົງໃນການຖືກຊົງບັນດານໃຫ້ເປັນຄືນມາ ຢ່າງພຣະອົງໄດ້ຖືກຊົງບັນດານໃຫ້ຄືນ
ພຣະຊົນ. 6 ເຮົາທັງຫລາຍຮູ້ສິ່ງນີ້ແລ້ວວ່າ ເພດຄົນເກົ່າຂອງພວກເຮົານັ້ນໄດ້ຖືກຄຶງໄວ້ກັບພຣະອົງແລ້ວ ເພື່ອເພດຄົນ
ເກົ່າຊຶ່ງເປັນທີ່ຢູ່ຂອງຄວາມຜິດບາບນັ້ນຈະໄດ້ຖືກທຳລາຍເສັຽ ແລະພວກເຮົາຈຶ່ງຈະບໍ່ໄດ້ເປັນຂ້ອຍຂ້າຂອງຄວາມຜິດ
ບາບອີກຕໍ່ໄປ. 7 ດ້ວຍວາຜູ້ທີ່ຕາຍໄປແລ້ວກໍພົ້ນຈາກຄວາມຜິດບາບ.*

ບັບຕິສະມາໂດຍຈຸ່ມໝົດທັງຕົວລົງໃນນ້ຳເປັນສິ່ງສຳຄັນ, ພວກເຮົາໃຫ້ຄຸນຄ່ານີ້ບໍ່ແມ່ນເພາະມັນມີຄວາມສຳຄັນສຳລັບການໄຖ່ບາບ, ແຕ່ເພາະມັນເປັນເຄື່ອງໝາຍທີ່ສະແດງເຖິງການໄຖ່ບາບຂອງເຮົາ ໃນບັບຕິສະມາ, ແມ່ນພວກເຮົາໄດ້ເປັນເຄື່ອງໝາຍໃນການຖືກຝັງໄວ້ດ້ວຍກັນກັບພຣະຄຣິດ. ບໍ່ພຽງແຕ່ການຕາຍຂອງພຣະຄຣິດແລະຖືກຝັງໄວ້ເທົ່ານັ້ນ, ພວກເຮົາຍັງຕ້ອງ " ຕາຍ" ແລະ ຖືກຝັງໄວ້ຢ່າງໜ້ອຍສອງທາງດ້ວຍກັນ:

- ພວກເຮົາ " ຕາຍ" ເພາະພວກເຮົາສຳນຶກໃນໂທດບາບຂອງເຮົາ, ດັ່ງໂປໂລໄດ້ຊີ້ໃຫ້ເຫັນໃນຕອນທ້າຍຂອງບົດນີ້, "ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ" (ຂໍ້ 23).
- ພວກເຮົາ " ຕາຍ" ເພາະພວກເຮົາມອບຕົວທັງໝົດໃຫ້ກັບພຣະຄຣິດ. ພວກເຮົາວາງຄວາມຝັນ, ຄວາມຫວັງ ແລະແຜນການຂອງເຮົາຕໍ່ໜ້າແທ່ນບູຊາພຣະອົງ, ຕັດສິດຂອງຕົນເອງ (ລູກາ 9:23 ).

ໂປໂລໄດ້ຊີ້ໃຫ້ເຫັນການນຳໃຊ້ທີ່ເຂົ້າໃຈແຈ້ງໃນຄວາມຈິງເຫຼົ່ານີ້ໃນຂໍ້ 7: "ດ້ວຍວ່າຜູ້ທີ່ຕາຍໄປແລ້ວກໍພົ້ນຈາກຄວາມຜິດບາບ." ເວົ້າອີກຢ່າງນຶ່ງ, ຄ່າຈ້າງຂອງຄວາມບາບກໍຄືຄວາມຕາຍ, ແຕ່ພວກເຮົາຕ້ອງຕາຍກັບພຣະຄຣິດ ດັ່ງນັ້ນ, ພວກເຮົາຈຶ່ງພົ້ນຈາກໜີ້ຂອງຄວາມບາບ. ຄົນທີ່ຕາຍແລ້ວກໍບໍ່ຈ່າຍໜີ້

ຄົນຕາຍຈະບໍ່ຕອບສນອງຕໍ່ການກະຕຸ້ນທາງນອກ. ເວົ້າອີກຢ່າງນຶ່ງ, ຜູ້ຕິດຕາມພຣະຄຣິດບໍ່ຕອບສນອງຕໍ່ຄວາມກົດດັນຂອງການຖືກທົດລອງ. ດຽວນີ້ພວກເຮົາໄດ້ຕາຍໃນພຣະຄຣິດແລ້ວ ແລະການລໍ້ໃຈໃຫ້ເຂົ້າໄປສູ່ການຖືກທົດລອງຈະບໍ່ມີຜົນກະທົບຕໍ່ເຮົາ. ຢ່າງໃດກໍຕາມ, ການຕາຍ ນັ້ນແມ່ນຂັ້ນຕອນທຳອິດ.

## 2. <u>ໂຣມ 6: 8–11</u>

*8ແຕ່ຖ້າວ່າເຮົາທັງຫລາຍຕາຍແລ້ວກັບພຣະຄຣິດ ພວກເຮົາເຊື່ອວ່າເຮົາຈະມີຊີວິດຢູ່ດ້ວຍກັນກັບພຣະອົງ. 9ເຮົາທັງຫຼາຍຮູ້ຢູ່ວ່າພຣະຄຣິດທີ່ຖືກຊົງບັນດານໃຫ້ຄືນພຣະຊົນແລ້ວນັ້ນ ຈະບໍ່ມີການສິ້ນພຣະຊົນອີກ ຄວາມຕາຍກໍຈະບໍ່ມີອຳນາດບັງຄັບພຣະອົງຕໍ່ໄປ. 10ດ້ວຍວ່າທີ່ພຣະອົງໄດ້ຊົງສິ້ນພຣະຊົນກໍສິ້ນພຣະຊົນຕໍ່ຄວາມຜິດບາບແຕ່ເທື່ອດຽວ ແຕ່ທີ່ພຣະອົງຊົງມີພຣະຊົນຢູ່ນັ້ນພຣະອົງກໍຊົງມີພຣະຊົນຢູ່ເພື່ອພຣະເຈົ້າ. 11ເໝືອນກັນນັ້ນແຫລະ, ເຈົ້າທັງຫລາຍຈົ່ງຖືວ່າພວກເຈົ້າໄດ້ຕາຍຕໍ່ຄວາມຜິດບາບແລ້ວ ແລະມີຊີວິດຢູ່ເພື່ອພຣະເຈົ້າໃນພຣະເຢຊູຄຣິດ.*

ພຣະຄຣິດເອີ້ນເອົາເຮົາບໍ່ພຽງແຕ່ໃຫ້ຕາຍຕໍ່ຊີວິດເກົ່າຂອງເຮົາເທົ່ານັ້ນ, ແຕ່ໃຫ້ເຮົາດຳເນີນຊີວິດທັງໝົດເພື່ອພຣະອົງໃນຊີວິດໃໝ່ຂອງເຮົາ. ພວກເຮົາໄດ້ຖືກຝັງໄວ້ກັບພຣະຄຣິດໃນບັບຕິສະມາ, ພວກເຮົາຈະຖືກຍົກຂຶ້ນໃນຊີວິດໃໝ່ຂອງເຮົາໃນພຣະອົງ. ຊີວິດໃໝ່ໃນພຣະຄຣິດນີ້ແມ່ນການສະແດງເຖິງຊີວິດໃໝ່ຂອງພຣະອົງຫລັງຈາກເປັນຄືນມາຈາກຕາຍໃນອຸບໂມງ. ຄວາມຕາຍເປັນຜົນມາຈາກຄວາມບາບ, ແຕ່ໃນພຣະຄຣິດພວກເຮົາຖືກປົດປ່ອຍຈາກຄວາມຕາຍ!

ໃນຄວາມຮູ້ສຶກ, ໂປໂລໄດ້ເວົ້າແລ້ວເວົ້າອີກໃນບົດນີ້, ຊຶ່ງຄຣູສອນທີ່ດີມັກຈະເຮັດ. ໂປໂລມີຄວາມປາຖນາຊຶມຊັບເອົາຄວາມຈິງທີ່ອັສຈັນນີ້: ທີ່ວ່າພຣະຄຣິສຕາຍພຽງຄັ້ງດຽວແລະເພື່ອທຸກໆຄົນ, ປົກຫຸ້ມດ້ວຍການເສັຽສະລະຊີວິດຂອງພຣະອົງຕໍ່ໜີ້ບາບຂອງມະນຸດທຸກຄົນ. ການຕາຍຂອງພຣະອົງເຮັດໃຫ້ຊີວິດຂອງເຮົາສາມາດທົນໄດ້, ແລະຊີວິດຂອງພຣະອົງທີ່ໃຫ້ເຮົາແມ່ນມີຄ່າແລະດີເລີດເກີນກວ່າທີ່ພວກເຮົາຈະຄາດຄິດໄດ້.

ເພາະການສິ້ນພຣະຊົນຂອງພຣະຄຣິດແລະການຄືນພຣະຊົນ, "ພຣະອົງມີຊີວິດຢູ່ເພື່ອພຣະເຈົ້າ." ແນ່ນອນສັພທຸກສິ່ງໃນຊີວິດຂອງພຣະຄຣິດແມ່ນພຣະປະສົງຂອງພຣະເຈົ້າ. ພຣະເຢຊູຊົງມີຊັຍຊະນະເໜືອຄວາມບາບແລະຄວາມຕາຍ. ດັ່ງນັ້ນພຣະອົງຈຶ່ງເປັນຊີວິດທີ່ເປັນຢູ່ຕລອດໄປເປັນນິດ ມີຄວາມສັມພັນກັບພຣະເຈົ້າພຣະບິດາຕລອດໄປ.

ນີ້ຄືຂ່າວດີທີ່ສຸດ: ຂອບຄຸນພຣະເຢຊູ, ພວກເຮົາສາມາດດຳເນີນຊີວິດຢູ່ໃນການນະມັສການພຣະເຈົ້າຕລອດໄປ

ເຊັ່ນດຽວກັນ. ໜ້າເສັງດາຍ, ພວກເຮົາມັກຈະພົບເຫັນຢູ່ເລື້ອຍວ່າເປັນການຍາກທີ່ຈະມີຊີວິດຢ່າງພຣະເຢຊູ, ພວກເຮົາຕາຍຕໍ່ຄວາມບາບ, ແຕ່ປາກົດວ່າຄວາມບາບບໍ່ໄດ້ຕາຍຕໍ່ເຮົາ.

ເມື່ອໂປໂລບອກໃຫ້ເຮົາ "ພິຈາຣະນາເບິ່ງຕົນເອງໃນການຕາຍຕໍ່ຄວາມບາບແລະມີຊີວິດຢູ່ໃນພຣະເຈົ້າພຣະເຢຊູຄຣິດ," ທ່ານໃຊ້ຄຳເວົ້າທາງດ້ານກົດໝາຍແລະທຸຣະກິດ. " ພິຈາຣະນາ" ແມ່ນການຈັດການກັບຄວາມຈິງ. ນັກບັນຊີບໍ່ໄດ້ເຮັດໃບລາຍການແຈ້ງເງິນທີ່ເຫລືອຕາມທີ່ລາວຕ້ອງການ; ລາວໄດ້ພິຈາຣະນາຕົວເລກຕໍ່ໜ້າຂອງລາວແລະບອກເລກເຫລົ່ານັ້ນເຂົ້າກັນເປັນຄວາມຈິງແລ້ວຂຽນລົງໃສ່ " ບັນທັດສຸດທ້າຍ" ບົນພື້ນຖານຕົວເລກເຫຼົ່ານັ້ນ.

ບັນທັດສຸດທ້າຍຂອງລູກສິດຂອງພຣະເຢຊູແມ່ນພວກເຮົາຕາຍຕໍ່ຄວາມບາບແຕ່ມີຊີວິດຢູ່ໃນພຣະເຈົ້າໃນພຣະຄຣິດ. ຂໍ້ຄວາມ ເຫຼົ່ານີ້ເປັນຄວາມຈິງ. ດັ່ງນັ້ນ, ຄວາມບາບບໍ່ມີສິດອຳນາດເໜືອຊີວິດຂອງເຮົາ. ຄວາມບາບບໍ່ສາມາດເຮັດສິ່ງໃດສິ່ງນຶ່ງກັບເຮົາ. ພວກເຮົາບໍ່ໄດ້ຕົກເຂົ້າໄປໃນການທຳຜິດຊ້ຳແລ້ວຊ້ຳອີກແລະມີຄວາມອັບອາຍອີກຕໍ່ໄປ ຖ້າມີຄວາມລົ້ມເຫລວ ກໍສັນຍາວ່າຈະເຮັດໃຫ້ດີຂຶ້ນກວ່າເກົ່າ. ພວກເຮົາເປັນອິສຣະແລ້ວ.

***<u>ໝາຍເຫດ</u>**: ຕາຍຕໍ່ບາບແມ່ນຕາຍຈາກບາບແລ້ວ ບໍ່ມີສ່ວນກ່ຽວຂ້ອງກັບອີກ ບໍ່ເຮັດບາບອີກເພາະຕາຍຈາກມັນແລ້ວ. ສ່ວນຕາຍໃນຄວາມບາບນັ້ນ ໝາຍເຖິງຊີວິດຈົມຢູ່ໃນຄວາມບາບແລະຕາຍຢູ່ໃນຄວາມບາບນັ້ນ ຍັງເຮັດບາບຢູ່*

## 3. <u>ໂຣມ 6:12-14</u>:

*12 ເຫດສັນນັ້ນ, ຕໍ່ໄປຢ່າໃຫ້ຄວາມຜິດບາບປົກຄອງຮ່າງກາຍທີ່ຕ້ອງຕາຍຂອງເຈົ້າທັງຫລາຍ ຊຶ່ງເຮັດໃຫ້ຕ້ອງເຊື່ອຟັງຕັນຫາຂອງກາຍນັ້ນ. 13 ຢ່າມອບອະວັຍຍະວະຂອງພວກເຈົ້າໃຫ້ແກ່ຄວາມຜິດບາບຕໍ່ໄປ ເພື່ອໃຫ້ເປັນເຄື່ອງໃຊ້ໃນການອະທັມ ແຕ່ຈົ່ງມອບຕົວຂອງເຈົ້າຖວາຍແກ່ພຣະເຈົ້າເປັນການສິ້ນສຸດ ເໝືອນກັບບຸກຄົນທີ່ເປັນຂຶ້ນມາຈາກຄວາມຕາຍແລ້ວ ແລະຈົ່ງມອບອະວັຍຍະວະຂອງເຈົ້າຖວາຍແກ່ພຣະເຈົ້າເປັນການສິ້ນສຸດ ເພື່ອເປັນເຄື່ອງໃຊ້ໃນການຊອບທັມຕໍ່ໄປ. 14 ດ້ວຍວ່າຕໍ່ໄປຄວາມຜິດບາບຈະບໍ່ບັງຄັບພວກເຈົ້າອີກ ເພາະວ່າເຈົ້າທັງຫລາຍບໍ່ໄດ້ຢູ່ໃຕ້ພຣະບັນຍັດແຕ່ຢູ່ໃຕ້ພຣະຄຸນ.*

ຕໍ່ຄຳຂໍຮ້ອງທັງໝົດນີ້ເປັນຄຳຖາມທີ່ສຳຄັນ: ດ້ວຍເຫດໃດພວກເຮົາຈຶ່ງຍັງບາບຢູ່? ຄຳຕອບແມ່ນພວກເຮົາຮູ້ວ່າເຮົາຕາຍຕໍ່ຄວາມບາບແລະຄ້າຍຄືກັບເຮົາກຳລັງດຳລົງຊີວິດຢູ່ໃນສອງເສັ້ນທາງທີ່ແຕກຕ່າງກັນ

ໃນຂໍ້ 12- 13 ໂປໂລສັ່ງສອນພວກເຮົາໃຫ້ຮູ້ຈັກໃນການປະຕິບັດຕົນໃນຄວາມຮູ້ວ່າພວກເຮົາຕາຍຕໍ່ຄວາມບາບຢ່າງໃດ. ທ່ານໄດ້ເວົ້າໂດຍເປັນພື້ນຖານວ່າ, " ເຊົາເຮັດບາບ!" ພວກເຮົາຈະບໍ່ປ່ອຍໃຫ້ທຸກພາກສ່ວນຊີວິດຂອງເຮົາ ຮ່າງກາຍ, ຄວາມຄິດ, ຫຼືຈິດໃຈຂອງເຮົາຫຸ້ມເທໃສ່ສິ່ງທີ່ບໍ່ເປັນຂອງພຣະເຈົ້າ.

ໂປໂລໄດ້ຂຽນຂໍ້ຄວາມນີ້ເພື່ອແກ້ໄຂຄຳສອນປອມໃນຄຣິສຕະຈັກສມັຍເລີ່ມແຮກ ທີ່ສອນວ່າຮ່າງກາຍຖືກແຍກອອກຈາກຊີວິດຈິດວິນຍານຢ່າງສິ້ນເຊີງ. ອີງຕາມຄຣູສອນປອມເຫຼົ່ານີ້, ມີພຽງຊີວິດຝ່າຍຈິດວິນຍານເທົ່ານັ້ນທີ່ສຳຄັນ; ຮ່າງກາຍບໍ່ສຳຄັນ, ດັ່ງນັ້ນ, ຖ້າບຸກຄົນທີ່ມີຊີວິດຈິດວິນຍານຢ່າງແທ້ຈິງ, ຄົນນັ້ນຈະເຮັດອັນໃດກໍໄດ້ກັບຊີວິດຝ່າຍເນື້ອໜັງຂອງລາວ ໂດຍຈະບໍ່ກະທົບກະເທືອນຕໍ່ຊີວິຝ່າຍຈິດວິນຍານຂອງລາວ(ນັ້ນແມ່ນຄຳສອນປອມ).

ໃນໂລກປະຈຸບັນ, ຄຣິສຕຽນຈຳນວນຫລາຍຍັງດຳລົງຊີວິດແບບນັ້ນຢູ່. ຕົວຢ່າງເຊັ່ນ, ຫຼາຍໆຄົນພະຍາຍາມທີ່ຈະເບິ່ງຮູບລາມົກໂດຍເວົ້າວ່າ: " ເຮົາບໍ່ໄດ້ເຮັດໃຫ້ຜູ້ໃດເສັງໃຈ. ບໍ່ມີໃຜຮູ້ດອກ. ນີ້ເປັນຄວາມບາບສ່ວນຕົວຂອງເຮົາ." ທີ່ຈິງບໍ່ເປັນດັ່ງນັ້ນ. ຄວາມບາບມີຜົນກະທົບແລະຜົນທີ່ຕາມມາ ທັງສອງນີ້ຈະເພີ່ມຂຶ້ນເລື້ອຍໆ ແລະເປັນອັນຕະລາຍເຖິງແກ່ຄວາມຕາຍໄດ້:

- ສິ່ງໃດທີ່ຕາເຫັນ, ສມອງກໍຈິດຈຳສິ່ງນັ້ນ.
- ສມອງຈິດຈຳສິ່ງໃດ, ຫົວໃຈກໍຢາກເຮັດສິ່ງນັ້ນ.

- ເຮົາຕ້ອງການສິ່ງໃດເຮົາກໍເຮັດສິ່ງນັ້ນ.
- ເຮົາເຮັດແນວໃດ ກໍບົ່ງບອກວ່າວ່າເຮົາເປັນຄົນແນວນັ້ນ.

ຄວາມບາບ, ບໍ່ວ່າຈະເປັນການສ່ວນຕົວດັ່ງທີ່ເຮົາຄິດ, ຈະສົ່ງຜົນອອກມາໃຫ້ສາທາຣະນະຊົນເຫັນຢູ່ສເມີ. ແລະ ຄວາມບາບ ບໍ່ວ່າມັນຈະ " ນ້ອຍ" ຊໍ່າໃດຕາມທີ່ພວກເຮົາຄິດ ຈະສົ່ງຜົນກະທົບຕໍ່ຄວາມສັມພັນຂອງພວກເຮົາກັບພຣະເຈົ້າ. ດ້ວຍເຫດຜົນນີ້, ໂປໂລເວົ້າວ່າພວກເຮົາຈະບໍ່ປ່ອຍໃຫ້ຄວາມບາບໃຊ້ສ່ວນໃດຂອງຮ່າງກາຍຫລືຊີວິດຂອງເຮົາ.

ແທນທີ່ຈະເປັນເຊັ່ນນັ້ນ, ໂປໂລໄດ້ສອນພວກເຮົາໃຫ້ " ຖວາຍຕົວເອງໃຫ້ແກ່ພຣະເຈົ້າແລະທຸກສ່ວນຂອງຮ່າງກາຍໃຫ້ເປັນອາວຸດແຫ່ງຄວາມຊອບທັມ. "ຂະນະທີ່ເຮົາຍອມຈໍານົນຕໍ່ພຣະຄຣິດໃນແຕ່ລະວັນ, ພຣະອົງບໍ່ພຽງແຕ່ໃຫ້ເຮົາມີກໍາລັງເອົາຊະນະການທົດລອງ; ພຣະອົງຍັງສືບຕໍ່ທໍາງານໃນຕົວເຮົາເພື່ອປິ່ນປົວຄວາມຕ້ອງການຂອງເຮົາ. ພຣະອົງຊົງເຮັດໃຫ້ເຮົາເປັນເໝືອນພຣະອົງ.

ແນ່ນອນ, ພວກເຮົາຖືກເອີ້ນໃຫ້ເຮັດວຽກງານຫລາຍກວ່າຫລີກເວັ້ນການເຮັດບາບ ໃນຂະນະທີ່ເຮົາຜ່ານຜ່າທາງຊີວິດ ຊຶ່ງພຣະຄຣິດປະທານໃຫ້ເຮົາຫລາຍກວ່າການຍົກໂທດ. ພຣະຄຣິດໄດ້ຕາຍບໍ່ພຽງແຕ່ເພື່ອການໃຫ້ອະພັຍແກ່ພວກເຮົາເທົ່ານັ້ນ, ແຕ່ເພື່ອຄວາມເປັນອິສຣະຂອງເຮົານໍາ ອິສຣະຈາກການຖືກລົງໂທດ, ຈາກອະດີດແລະຈາກຄວາມບາບຂອງເຮົາ. ພວກເຮົາມີອິສຣະທີ່ຈະຮັກ, ໃຫ້ອະພັຍ, ແລະຮັບໃຊ້ເໝືອນຢ່າງພຣະອົງ. ພວກເຮົາມີອິສຣະທີ່ຈະຊົມຊື່ນຍິນດີໃນພຣະອົງ. ພຣະຄຣິດມີຫຼາຍໆສິ່ງສໍາລັບຊີວິດຂອງທ່ານ. ຈົ່ງໝັ້ນໃຈວ່າທ່ານຈະໄດ້ຮັບທັງໝົດນັ້ນ.

## ນໍາໃຊ້ໃນຊີວິດ

**ຜ່ານທາງພຣະຄຣິດ, ພວກເຮົາມີຊັຍຊະນະເໜືອຄວາມບາບ. ຈະມີພະຍານຫຼັກຖານຢ່າງໃດໃນຊີວິດຂອງທ່ານໃນອາທິດນີ້ວ່າທ່ານມີຊັຍຊະນະ? ຈົ່ງພິຈາຣະນາເອົານຶ່ງຂໍ້ຂອງຄໍາແນະນໍານີ້.**

- **ສາລະພາບຜິດ.** ມອບຄວາມບາບຂອງທ່ານໃຫ້ແກ່ພຣະຄຣິດ ບໍ່ວ່າມັນຈະນ້ອຍຂນາດໃດເມື່ອທ່ານພິຈາຣະນາເບິ່ງມັນ. ຍອມຮັບວ່າພຣະຄຣິດເປັນອົງພຣະຜູ້ເປັນເຈົ້າແລະເຈົ້ານາຍ, ແລະເລືອກທີ່ຈະດໍາເນີນຊີວິດທີ່ມີຊັຍຊະນະໃນພຣະອົງ.
- **ກໍາຈັດອອກໄປ.** ປະເມີນເບິ່ງການດໍາເນີນຊີວິດຂອງທ່ານເລື່ອງອຸປະນິສັຍ, ຫລືຄວາມສັມພັນທີ່ຈະຊັກນໍາທ່ານເຂົ້າໄປໃນຄວາມບາບ. ວາງແຜນກໍາຈັດມັນອອກໄປຫຼືຈໍາກັດອໍານາດຂອງມັນທີ່ຢູ່ເໜືອທ່ານ
- **ທໍາງານເປັນທີມ.** ເປັນເພື່ອນຮ່ວມງານກັບຜູ້ເຊື່ອຄົນອື່ນໆແລະໃຫ້ການຊ່ວຍເຫຼືອຊຶ່ງກັນແລະກັນຕໍ່ຄໍາເວົ້າທີ່ວ່າ " ບໍ່ " ຕໍ່ຄວາມບາບ ແລະຄໍາວ່າ "ໂດຍ" ຕໍ່ພຣະເຢຊູ. ວາງແຜນປະຕິບັດຕົວຈິງເພື່ອຜູກພັນກັນຢ່າງເປັນປົກກະຕິແລະເຕືອນສະຕິກັນແລະກັນວ່າຄວາມບາບຈະບໍ່ເປັນເຈົ້ານາຍເຮົາອີກ; ມີແຕ່ພຣະເຢຊູເທົ່ານັ້ນ.

ພວກເຮົາທັງໝົດຈະເຮັດຜິດຂະນະທີ່ຕິດຕາມພຣະຄຣິດ ພວກເຮົາທັງໝົດຈະຕໍ່ສູ້ກັບຄວາມບາບຈົນພວກເຮົາໄດ້ເຫັນພຣະອົງໜ້າຕໍ່ໜ້າແລ້ວພວກເຮົາບໍ່ຢູ່ໃນການຕໍ່ສູ້ສິ່ງເຫລົ່ານັ້ນອີກ. ພວກເຮົາມີຊັຍຊະນະເໜືອຄວາມບາບ ເພາະເຮົາເປັນຂອງພຣະເຢຊູ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**